# ພິທີປະກາດການຈັດຕັ້ງຂັ້ນຮອງຜູ້ອຳນວຍການ ບໍລິສັດ ຂສລ





ໃນຕອນເຊົ້າຂອງວັນທີ 02 ກັນຍາ 2022 ທີ່ຫ້ອງປະຊຸມທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ມີພິທີປະກາດການຈັດຕັ້ງຂອງບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ (ຂສລ) ຂຶ້ນ ໂດຍໃຫ້ກຽດເປັນປະທານຂອງ **ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານສະພາບໍລິຫານ ບໍລິສັດ ຂສລ** ແລະ ການເຂົ້າຮ່ວມຂອງຄະນະສະພາບໍລິຫານ ບໍລິສັດ ຂສລ, ບັນດາກົມທີ່ກ່ຽວຂ້ອງພາຍໃນທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍພະນັກງານ ບໍລິສັດ ຂສລ ທັງໝົດເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີດັ່ງກ່າວໄດ້ຮັບຟັງການລາຍງານສະພາບການເຄື່ອນໄຫວວຽກງານຂອງ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໂດຍສັງເຂບ ໄລຍະ 8 ເດືອນ ແລະ ແຜນ 4 ເດືອນທ້າຍປີ 2022 **ເຊິ່ງນຳສະເໜີໂດຍ ທ່ານ ນ. ເພັດລຳພອນ ຄຳນໍເພັດ ຮອງຜູ້ອຳນວຍການ ຂສລ.** ຈາກນັ້ນ, **ທ່ານ ນາງ ວິນຄຳ ລຸນທອນ ຜູ້ອຳນວຍການໃຫຍ່ ບໍລິສັດ ຂສລ** ໄດ້ອ່ານຂໍ້ຕົກລົງຈຳນວນ 02 ສະບັບ ຄື:

1. ຂໍ້ຕົກລົງວ່າດ້ວຍການອະນຸມັດໃຫ້ພະນັກງານອອກພັກການ-ຮັບອຸດໜູນບຳນານ ໂດຍໃຫ້ **ທ່ານ ນາງ ພອນສະຫວັນ ໂຄດສຸວັນ ອະດີດຮອງຜູ້ອຳນວຍການ ຂສລ** ເຂົ້າປະຈຳການຢູ່ທະນາຄານແຫ່ງ ສປປ ລາວ ແລະ ອະນຸມັດໃຫ້ຜູ້ກ່ຽວອອກພັກການ-ຮັບອຸດໜູນບຳນານ ນັບແຕ່ເດືອນກັນຍາ 2022 ເປັນຕົ້ນໄປ;
2. ຂໍ້ຕົກລົງວ່າດ້ວຍແຕ່ງຕັ້ງ **ທ່ານ ນາລິນ ສີລະວົງສິດ** ທີ່ຍົກຍ້າຍມາຈາກທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ມາປະຈຳການ ຢູ່ ທຫລ ເປັນ ຮອງຜູ້ອຳນວຍການ ບໍລິສັດ ຂສລ.






ໃນຕອນທ້າຍຂອງພິທີ **ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານສະພາບໍລິຫານ ບໍລິສັດ ຂສລ** ໄດ້ໂອ້ລົມຕໍ່ພິທີດັ່ງກ່າວວ່າ: ພິທີປະກາດການຈັດຕັ້ງຂອງບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນມື້ນີ້ເປັນເຫດການທີ່ມີຄວາມໝາຍຄວາມສຳຄັນຕໍ່ ບໍລິສັດ ຂສລ ເຊິ່ງການແຕ່ງຕັ້ງພະນັກງານຂັ້ນນຳພາ-ຫຼັກແຫຼ່ງ ແລະ ການເຂົ້າຮັບອຸດໜູນບຳນານ ແມ່ນໄດ້ປະຕິບັດມາເປັນປົກກະຕິ ເຊິ່ງເປັນຫຼັກການ ແລະ ລະບຽບການໃນການປະຕິບັດວຽກງານ. ພ້ອມດຽວກັນນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ຄະນະຜູ້ອຳນວຍການ ກໍຄືຜູ້ທີ່ໄດ້ຮັບການປະກາດແຕ່ງຕັ້ງໃໝ່ ນຳພາພະນັກງານປະຕິບັດໜ້າທີ່ວຽກງານດ້ວຍຄວາມເອົາໃຈໃສ່ໂດຍສະເພາະການຄົ້ນຄວ້າພັດທະນາຜະລິດຕະພັນໃໝ່ ອອກສູ່ສັງຄົມ ແລະ ເນັ້ນໜັກໃຫ້ ສະມາຊິກພັກ-ພະນັກງານທຸກຄົນ ຈົ່ງສືບຕໍ່ຂະຫຍາຍດ້ານຕັ້ງໜ້າ ແລະ ປະຕິບັດໜ້າທີ່ທີ່ໄດ້ຮັບມອບໝາຍຂອງຕົນໃຫ້ໄດ້ຮັບຜົນສຳເລັດ ແລະ ມີປະສິດທິພາບສູງ.

